**ມິຊຊາອາທິດທີ 2 ກຳນົດພຣະກຣິສຕະຄົມ**

**ວັນທີ 5 ທັນວາ 2021**



**ພຣະວໍລະສານໂດຍນັກບຸນລູກາ 3, 1-6**

ປີທີສິບຫ້າແຫ່ງລາຊາການຂອງກະສັດຕິເບຣິໂອເຊຊາເຣ, ປອນຊີໂອປີລາໂຕເປັນຜູ້ຄອງແຂວງຢູເດ, ເຮໂຣດເປັນເຈົ້າເມືອງກາລີເລ, ຟີລິບເປນ້ອງຊາຍເປັນເຈົ້າເມືອງອີຕູເຣ ແລະຕຣາໂກນິດ. ສ່ວນລີຊານີອາເປັນເຈົ້າເມືອງອາບີແລນ, ອັນນາແລະກາອີຟາເປັນເຈົ້າຄະນະສົງ. ໃນປີນັ້ນເອງພຣະເຈົ້າໄດ້ກ່າວກັບຢວງບຸດຂອງຊາກາຣີອາຢູ່ທີ່ປ່ງວ.

ຢວງຈຶ່ງໄປທົ່ວເຂດແຂວງທີ່ຢູ່ຣີມຝັ່ງແມ່ນ້ຳຢໍຣແດນ ເທດສະໜາເລື່ອງພິທີລ້າງຍົກບາບໃຫ້ພວກທີ່ຍອມເປັນທຸກກັບໃຈ. ຕາມຖ້ອຍຄຳທີ່ໄດ້ຂຽນໄວ້ໃນໜັງສືຂອງປະພາສົກອີຊາຢາວ່າດັ່ງນີ້: ມີສຽງຮ້ອງເຕືອນໃນທີ່ປ່ງວວ່າ ຈົ່ງຈັດຕຽມເສັ້ນທາງຂອງພຣະເຈົ້າໃຫ້ຮາບພຽງ. ບ່ອນຫລຸບບ່ອນຕ່ຳຈະຖົມໃຫ້ເຕັມ. ພູເຂົາແລະເນີນຈະຕັດລົງໃຫ້ພຽງ, ທາງຄົດລ້ຽວຈະຕັດໃຫ້ຊື່, ທາງເປັນຄື້ນຈະກວາດໃຫ້ລ່ຽນ. ແລ້ວທຸກຄົນຈະໄດ້ພົບເຫັນຄວາມຮອດຂອງພຣະເຈົ້າ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ອາທິດແລ້ວນີ້, ພວກເຮົາໄດ້ກ້າວເຂົ້າສູ່ອາທິດທີໜຶ່ງກໍານົດພຣະກຣິສຕະຄົມຊຶ່ງເປັນຊ່ວງເວລາແຫ່ງການລໍຖ້າການສະເດັດກັບມາອີກຄັ້ງຂອງພຣະເຢຊູເຈົ້າ. ແຕ່ຍ້ອນພວກເຮົາບໍ່ຮູ້ຈັກວັນແລະເວລາທີ່ພຣະອົງຈະກັບມາ. ດັ່ງນັ້ນພວກເຮົາຈຶ່ງຕ້ອງຕື່ນເຝົ້າແລະພາວະນາເພື່ອພວກເຮົາຈະໄດ້ພ້ອມຕ້ອນຮັບພຣະອົງໃນທຸກຍາມທຸກເວລາ.

ສ່ວນວັນອາທິດທີສອງກໍານົດພຣະກຣິສຕະຄົມນີ້, ວາຈາພຣະເຈົ້າກໍແນະນໍາພວກເຮົາບໍ່ພຽງແຕ່ໃຫ້ຕື່ນເຝົ້າແລະພາວະນາເທົ່ານັ້ນ, ແຕ່ຍັງຕ້ອງຜັນປ່ຽນຊີວິດການກະທໍາຂອງພວກເຮົາອີກດ້ວຍ. ການປ່ຽນແປງຊີວິດການກະທໍາທີ່ບໍ່ດີຂອງພວກເຮົານັ້ນ ໃນພາສາພຣະວໍລະສານຮຽກວ່າການປ່ຽນແປງເສັ້ນທາງໃຫ້ຮາບພຽງ. ເສັ້ນທາງທີ່ກ່າວມານີ້ແມ່ນຄວາມນຶກຄິດ, ຄໍາປາກຄໍາເວົ້າແລະຄວາມປາດຖະໜາບໍ່ດີຕ່າງໆຂອງພວກເຮົານັ້ນເອງ.

ບ່ອນໃດຍັງເປັນໂນນອັນແມ່ນຄວາມຈອງຫອງ, ຄວາມມັກໄດ້ໂລບມາກຮັ່ງມີແລະຊື່ສຽງ, ຄວາມຢາກເປັນທີໜຶ່ງໃນສັງຄົມ, ໃຫ້ພວກເຮົາດັດແປງໃຫ້ຮາບພຽງດ້ວຍການມີຈິດໃຈສຸພາບອ່ອນນ້ອມແລະຮັບໃຊ້ຄົນອື່ນເໝືອນກັບພຣະເຢຊູເຈົ້າ ພຣະອົງມາບໍ່ແມ່ນເປັນນາຍແຕ່ເປັນຜູ້ຮັບໃຊ້.

ບ່ອນໃດຍັງເປັນຂຸມອັນແມ່ນຄວາມແບ່ງແຍກແລະຜິດຖຽງກັນ, ໃຫ້ພວກເຮົາຖົມໃຫ້ເຕັມດ້ວຍຄວາມຮັກແລະຄວາມເຂົ້າໃຈ. ໂດຍສະເພາະແມ່ນການໃຫ້ອະໄພ. ດັ່ງພຣະເຢຊູເຈົ້າ, ພຣະອົງມາໃນໂລກບໍ່ແມ່ນເພື່ອຕັດສິນ, ແຕ່ເພື່ອນໍາຄວາມຮັກແລະການໃຫ້ອະໄພມາໃຫ້ພວກເຮົາ.

ບ່ອນໃດຍັງຄົດໂງ່ອັນແມ່ນຄວາມບໍ່ຊື່ສັດຕໍ່ໜ້າທີ່ຂອງຕົນ, ໃຫ້ພວກເຮົາດັດແປງໃຫ້ຊື່ດ້ວຍການເວົ້າໃນສິ່ງທີ່ຖືກຕ້ອງ, ຄິດໃນສິ່ງທີ່ດີແລະປະຕິບັດໃຫ້ສອດຄ່ອງກັບກົດບັນຍັດຂອງພຣະເຈົ້າແລະກົດໝາຍຂອງສັງຄົມ. ສິ່ງເຫລົ່ານີ້ຈະຊ່ວຍພວກເຮົາໃຫ້ພັດທະນາຕົວເອງນັບມື້ນັບດີຂຶ້ນແລະສົມວ່າພວກເຮົາເປັນສິດຂອງພຣະເຢຊູເຈົ້າ. ແລະແນ່ນອນ, ສິ່ງທີ່ພວກເຮົາຈະພົບໃນຊີວິດນັ້ນແມ່ນຄວາມສຸກແລະຄວາມຮັກຂອງພຣະເຈົ້າ.

**ພາວະນາ**

ໂອພຣະເຢຊູເຈົ້າ ພຣະວາຈາຂອງພຣະເຈົ້າທີ່ຈະລົງມາຮັບກາຍເປັນມະນຸດໃນວັນບຸນໂນແອນທີ່ຈະມາເຖິງ. ລູກຂໍຂອບພຣະຄຸນພຣະອົງສໍາລັບແສງສະວ່າງແຫ່ງວາຈາຂອງພຣະອົງ. ໂຜດຊ່ວຍລູກໃຫ້ຮູ້ຈັກຜັນປ່ຽນຊີວິດໃນແຕ່ລະວັນເພື່ອລູກຈະໄດ້ພ້ອມໄປຕ້ອນຮັບພຣະອົງໃນວັນທີ່ພຣະອົງຈະສະເດັດກັບມາ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ